# ບົດບັນທຶກຄວາມເຂົ້າໃຈ

## ລະຫວ່າງ

## ວິທະຍາໄລຄູສະຫວັນນະເຂດ ສປປ ລາວ

## ກັບ

## ມະຫາວິທະຍາໄລຣາຊະພັດບູຣີຣຳ ປະເທດໄທ

---

ວິທະຍາໄລຄູສະຫວັນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມະຫາວິທະຍາໄລຣາຊະພັດບູຣີຣຳ ປະເທດໄທ ໄດ້ເຫັນດີຮ່ວມມືກັນໃນການສົ່ງເສີມການແລກປ່ຽນຖັນແຖວຄູ - ອາຈານ, ນັກວິຊາການ ແລະ ນັກສຶກສາ ໂດຍຖືວ່າ ຂະບວນການວິໄຈ ແລະ ການສຶກສາ ທີ່ສອງສະຖາບັນຈະໄດ້ຮັບການສົ່ງເສີມ ແລະ ມີຄວາມເຂົ້າໃຈຮ່ວມກັນລະຫວ່າງ ຄະນະອາຈານ ແລະ ນັກສຶກສາທັງສອງສະຖາບັນຈະໄດ້ເພີ່ມຂຶ້ນ.

1. **ທັງສອງຝ່າຍຈະສະໜັບສະໜູນກິດຈະກຳດັ່ງຕໍ່ໄປນີ້:**

1.1 **ການແລກປ່ຽນອາຈານ**

ອາຈານ ແລະ ຜູ້ບໍລິຫານການສຶກສາທີ່ປະຕິບັດໜ້າທີ່ການສອນຢູ່ໃນສອງສະຖາບັນ ສາມາດແລກປ່ຽນການສອນຮ່ວມກັນໃນສາຂາວິຊາທີ່ຕ້ອງການໃນເວລາທີ່ເໝາະສົມ ໂດຍໄດ້ຮັບການເຫັນດີເປັນເອກະພາບຂອງທັງສອງຝ່າຍ ແຕ່ສະຖາບັນເຈົ້າພາບທີ່ຈັດການສອນຕ້ອງຮັບຜິດຊອບຄ່າທີ່ພັກ ແລະ ການອຳນວຍຄວາມສະດວກຕາມຄວາມສາມາດຂອງສະຖາບັນນັ້ນ ສຳລັບຄ່າໃຊ້ຈ່າຍສ່ວນຕົວຜູ້ກ່ຽວຂ້ອງຕ້ອງຮັບຜິດຊອບເອງ.

1.2 **ການແລກປ່ຽນນັກສຶກສາ**

ນັກສຶກສາ ແລະ ອາຈານທີ່ສົນໃຈເຂົ້າຮຽນສາຂາວິຊາຕ່າງໆຕາມຫຼັກສູດຂອງສະຖາບັນທີ່ມີຢູ່ ສາມາດສະໝັກເຂົ້າຮຽນໄດ້ຕາມແຈ້ງການຂອງສະຖາບັນໄລຍະສັ້ນ ໄລຍະຍາວໃນທຸກລະດັບ ສະຖາບັນເຈົ້າພາບຈະຍົກເວັ້ນຄ່າຮຽນ, ຄ່າທີ່ພັກ ແລະ ການອຳນວຍຄວາມສະດວກໃນໄລຍະທີ່ກຳລັງສຶກສາ ຕາມຄວາມສາມາດຂອງສະຖາບັນນັ້ນ ສຳລັບຄ່າໃຊ້ຈ່າຍສ່ວນຕົວຜູ້ກ່ຽວຂ້ອງຕ້ອງຮັບຜິດຊອບເອງ.

1.3 **ການແລກປ່ຽນທາງດ້ານວັດທະນະທຳ**

ທັງສອງສະຖາບັນຈະແລກປ່ຽນສິລະປະ, ວັດທະນະທຳ ແລະ ເຂົ້າຮ່ວມໃນພິທີສຳຄັນຕ່າງໆເຊັ່ນ: ວັນຄູແຫ່ງຊາດ ແລະ ວັນບຸນປີໃໝ່ລາວ ເປັນຕົ້ນ

1.4 **ການແລກປ່ຽນດ້ານວິຊາການ**

ທັງສອງສະຖາບັນແລກປ່ຽນປະສົບການທາງດ້ານວິຊາການ ໂດຍການຈັດສຳມະນາ ຫຼື ປະຊຸມວິຊາການກ່ຽວກັບເລື່ອງທີ່ສົນໃຈ ການວິໄຈພາກປະຕິບັດ, ການຄົ້ນຄວ້າເອກະສານ, ການທົດລອງວິທະຍາສາດໃນລາຍວິຊາເຄມີສາດ, ຊີວະສາດ, ຟີຊິກສາດ, ຂຽນປຶ້ມຕຳລາຮຽນ, ຜະລິດສື່ການສອນ, ຜົນງານວິຊາການ ຕາມຄວາມຕ້ອງການຂອງທັງສອງສະຖາບັນ.